**ຟັງທາງນີ້:** **ຖ້າຫາກວ່າທ່ານ ຫລື ສະມາຊິກຄອບຄົວຄົນນຶ່ງໄດ້ຮັບການເບິ່ງແຍງດູແລສ່ວນຕົວທີ່ຖືກອອກທຶນໃຫ້ໂດຍ MEDICAID ໃນຖານະເປັນເດັກນ້ອຍຄົນນຶ່ງ ຫລື ທ່ານເປັນຜູ້ໃຫ້ການບໍຣິການສ່ວນບຸກຄົນຂອງການເບິ່ງແຍງດູແລສ່ວນຕົວທີ່ຖືກອອກທຶນໃຫ້ໂດຍ MEDICAID ໃຫ້ແກ່ເດັກນ້ອຍຜູ້ທີ່ທ່ານອາສັຍຢູ່ນຳ, ສັນຍາຂອງການຕົກລົງກັນທີ່ຖືກວາງອອກມາອາດຈະສະທ້ອນເຖິງສິດທິຂອງທ່ານ.**

ສານໄດ້ອະນຸຍາດໃບແຈ້ງການໃບນີ້. ອັນນີ້ບໍ່ແມ່ນການການຊັກຊວນຮຽກຮ້ອງຈາກທະນາຍຄວາມ.

- *M.T.E. et al., v. Wash. Dep't of Soc. & Health Servs.* ແມ່ນການຟ້ອງຂຶ້ນສານເປັນກຸ່ມຊຶ່ງໃນນັ້ນຜູ້ຮັບການຊ່ວຍເຫລືອ Medicaid ສຳລັບເດັກນ້ອຍ ແລະ ຜູ້ໃຫ້ການບໍຣິການສ່ວນບຸກຄົນຂອງການເບິ່ງແຍງດູແລສ່ວນຕົວທີ່ຖືກອອກທຶນໃຫ້ໂດຍ Medicaid ໄດ້ຟ້ອງຮ້ອງກົມສັງຄົມສົງເຄາະ ແລະ ສາທາຣະນະສຸກຂອງຣັດວໍຊິງຕັນ (Washington Department of Social and Health Services) (DSHS) ກ່ຽວກັບກົດຫມາຍ WAC 388-106-0213, ຖືກອີງໃສ່ໃນທີ່ນີ້ວ່າແມ່ນ "Children's Assessment Rule (ກົດຣະບຽບການຕີຣາຄາປະເມີນຜົນຂອງເດັກນ້ອຍ)" ຫລື "Rule (ກົດຣະບຽບ)." ກົດຣະບຽບອັນນີ້ໄດ້ຖືກວາງໃຊ້ມາຕັ້ງແຕ່ເດືອນຈຸນລາຍ 1, 2005 ໄປເຖິງເດືອນໂນເວັມເບີ 30, 2011. The Washington Supreme Court (ສານສູງສຸດຂອງຣັດວໍຊິງຕັນ) ໄດ້ພິຈາຣະນາເຫັນວ່າກົດຣະບຽບບໍ່ມີຄຸນຄ່າໃຊ້ການໄດ້.
- ໃນເດືອນອັກໂຕເບີ 2015, ທຸກພາກສ່ວນຢູ່ໃນ *M.T.E.* ໄດ້ບັນລຸການຕົກລົງເຫັນພ້ອມນຳກັນ. DSHS ໄດ້ຕົກລົງຍິນຍອມທີ່ຈະເອົາເງິນຕົກລົງກັນຈຳນວນ $4,000,000 ໃຫ້, ຊຶ່ງວ່າຈາກເງິນອັນນີ້ ການທວງເອົາເງິນຈະຖືກຈ່າຍເງິນໃຫ້ສຳລັບ (1) ຄ່າໃຊ້ຈ່າຍອອກຈາກຖົງຕົນເອງສຳລັບການບໍຣິການ MPC ຊຶ່ງຈະຕ້ອງຖືກຄຸ້ມກັນຈ່າຍໃຫ້ແຕ່ວ່າຍ້ອນການວາງໃຊ້ກົດຣະບຽບ, ແລະ (2) ວຽກງານທີ່ບໍ່ຖືກຈ່າຍເງິນໃຫ້ຊຶ່ງຖືກປະຕິບັດໂດຍຜູ້ໃຫ້ການບໍຣິການສ່ວນບຸກຄົນຜູ້ທີ່ອາສັຍຢູ່ນຳຜູ້ຮັບການຊ່ວຍເຫລືອ Medicaid ສຳລັບເດັກນ້ອຍຂອງເຂົາເຈົ້າຊຶ່ງຄວນຈະຖືກຄຸ້ມກັນແຕ່ວ່າຍ້ອນການວາງໃຊ້ກົດຣະບຽບ.
- Thurston County Superior Court (ສານສູງສຸດຂອງເທີສເຕີນຄາວຕີ) ໄດ້ອະນຸມັດໃນຂັ້ນປະຖົມມະເລີກສັນຍາການຕົກລົງກັນທີ່ຖືກວາງອອກມາ. ໃບແຈ້ງການໃບນີ້ໄດ້ຖືກສັ່ງອອກມາໃຫ້ອະທິບາຍສິດທິທາງກົດຫມາຍຂອງທ່ານ.

| ສິດທິທາງກົດຫມາຍຂອງທ່ານໃນການຟ້ອງຂຶ້ນສານອັນນີ້ | |
|---|---|
| ທ່ານຈະອອກຄວາມເຫັນໃສ່ສັນຍາການຕົກລົງກັນທີ່ຖືກວາງອອກມາໄດ້. | **ທ່ານມີສິດທີ່ຈະອອກຄວາມເຫັນໃສ່, ຄັດຄ້ານໃສ່, ຫລື ສະນັບສະນູນສັນຍາການຕົກລົງກັນທີ່ຖືກວາງອອກມາ.** ສານຈະຕັດສິນວ່າຈະອະນຸມັດ ຫລື ປະຕິເສດສັນຍາການຕົກລົງກັນທີ່ຖືກວາງອອກມາຫລັງຈາກການຟັງເຣື່ອງຂັ້ນສຸດທ້າຍໃນວັນທີ 05/20/2016 ຢູ່ທີ່ 9:00 am, Thurston County Courthouse, 2000 Lakeridge Drive SW, Room 204, Olympia, WA 98502. |
| ທ່ານຈະຍື່ນໃບທວງເງິນໄດ້. | **ທ່ານຈະຍື່ນໃບທວງເງິນໄດ້** ສຳລັບບໍ່ວ່າຈະເປັນ (1) ການຈ່າຍເງິນແທນຄືນສຳລັບຄ່າໃຊ້ຈ່າຍອອກຈາກຖົງຕົນເອງທີ່ທ່ານໄດ້ຈ່າຍສຳລັບການບໍຣິການ MPC ທີ່ທ່ານ ຫລື ສະມາຊິກຄອບຄົວຂອງທ່ານໄດ້ຮັບໃນຖານະເປັນເດັກນ້ອຍຄົນນຶ່ງ, ຫລື (2) ຄ່າທົດແທນສຳລັບວຽກງານ MPC ທີ່ບໍ່ທັນຖືກຈ່າຍເງິນໃຫ້ເທື່ອທີ່ທ່ານໄດ້ເຮັດສຳລັບເດັກນ້ອຍ. |
| ທ່ານຈະຂໍໃຫ້ຖືກຍົກເວັ້ນກໍໄດ້. | **ທ່ານຈະອອກຈາກການຟ້ອງສານອັນນີ້ໄດ້.** ຖ້າຫາກວ່າທ່ານຂໍໃຫ້ຖືກຍົກເວັ້ນ, ທ່ານຈະບໍ່ສາມາດທີ່ຈະຍື່ນໃບທວງເງິນສຳລັບການຈ່າຍເງິນແທນຄືນ ຫລື ຄ່າທົດແທນ. ເຖິງຢ່າງໃດກໍຕາມ, ທ່ານຈະຮັກສາສິດທິຕ່າງໆທີ່ຈະຟ້ອງກົມ DSHS ຕ່າງຫາກກ່ຽວກັບການທວງເງິນຕາມກົດຫມາຍແນວດຽວກັນຢູ່ໃນການຟ້ອງຂຶ້ນສານອັນນີ້. |
| ທ່ານຈະບໍ່ເຮັດແນວໃດກໍໄດ້. | **ຖ້າຫາກວ່າທ່ານບໍ່ເຮັດຫຍັງຫມົດ, ແລ້ວທ່ານຈະຍັງຢູ່ໃນນຶ່ງຂອງການຟ້ອງຂຶ້ນສານເປັນກຸ່ມຢູ່.** ໂດຍການບໍ່ເຮັດຫຍັງຫມົດ, ຖ້າຫາກວ່າທ່ານເປັນສະມາຊິກຂອງການຟ້ອງຂຶ້ນສານເປັນກຸ່ມ, ທ່ານສະລະສິດຕ່າງໆທີ່ຈະຟ້ອງກົມ DSHS ຕ່າງຫາກກ່ຽວກັບການທວງເງິນຕາມກົດຫມາຍແນວດຽວກັນຢູ່ໃນການຟ້ອງຂຶ້ນສານອັນນີ້. ນອກຈາກວ່າທ່ານຍື່ນການທວງເງິນ, ທ່ານຈະບໍ່ໄດ້ຮັບສະວັດດີການແນວໃດຈາກສັນຍາການຕົກລົງກັນທີ່ຖືກວາງອອກມາ. ທ່ານຈະບໍ່ຮັບຜິດຊອບສຳລັບການຈ່າຍເງິນຄ່າທຳນຽມ ແລະ ຄ່າໃຊ້ຈ່າຍສຳລັບທະນາຍຄວາມອອກຈາກຖົງຂອງທ່ານເອງ. |

Если Вы желаете прочитать это извещение на русском языке, пожалуйста, посетите [WEBSITE].
如果您想閱讀中文的本通知書, 請前往網站 [WEBSITE].
Nếu quý vị muốn đọc thông báo này bằng tiếng Việt Nam, xin đến [WEBSITE].
이 통지서를 한국어로 읽으시기 원할 경우는 [WEBSITE]을 방문하십시오.
Haddii aad jeclaan lahayd inaad akhrido ogeysiiskan oo Somali ah, fadlan tag [WEBSITE].
ប្រសិនបើអ្នកចង់អានសេចក្តីជូនដំណឹងនេះជាភាសាខ្មែរ សូមទៅកាន់ [WEBSITE]។
Si desea leer esta notificación en español, por favor diríjase a [WEBSITE].
Nếu quý vị muốn đọc thông báo này bằng tiếng Việt Nam, xin đến [WEBSITE].
**ຖ້າຫາກວ່າທ່ານຢາກຈະອ່ານໃບແຈ້ງການໃບນີ້ເປັນພາສາລາວ, ກະຣຸນາໄປທີ່** [WEBSITE]

# <u>ຄຳຖາມທີ່ມັກຖືກຖາມກັນຢູ່ເລື້ອຍໆ</u>

## 1. ເປັນຫຍັງຂ້ອຍຈຶ່ງໄດ້ຮັບໃບແຈ້ງການໃບນີ້?

ທ່ານໄດ້ຮັບໃບແຈ້ງການໃບນີ້ຍ້ອນວ່າກົມ DSHS ໄດ້ພິຈາລະນາເຫັນວ່າທ່ານ ຫລື ສະມາຊິກຄອບຄົວຂອງທ່ານ <u>**ອາດຈະ**</u> ເປັນສະມາຊິກຂອງນຶ່ງຂອງການຟ້ອງຂື້ນສານເປັນກຸ່ມສອງຢ່າງຕໍ່ລົງໄປນີ້:

<u>*ການຟ້ອງຂື້ນສານເປັນກຸ່ມຂອງຜູ້ຮັບການຊ່ວຍເຫລືອຂອງການຕົກລົງກັນ*</u>

ບຸກຄົນທຸກໆຄົນຜູ້ທີ່, ໃນຣະຫວ່າງ *ຣະຍະເວລາຂອງການຟ້ອງຂື້ນສານເປັນກຸ່ມ:* (1) ເປັນຜູ້ຮັບການຊ່ວຍເຫລືອຂອງການບໍຣິການເບິ່ງແຍງດູແລສ່ວນຕົວທີ່ຖືກອອກທຶນໂດຍ Medicaid; (2) ໄດ້ການບໍຣິການເບິ່ງແຍງດູແລສ່ວນຕົວທີ່ຖືກອອກທຶນໃຫ້ໂດຍ Medicaid ຂອງເຂົາເຈົ້າຖືກພິຈາຣະນາໂດຍການວາງໃຊ້ກົດຫມາຍອັນກ່ອນ WAC 388-106-0213; ແລະ (3) ຜູ້ທີ່ໄດ້ຈ່າຍເງິນອອກຈາກຖົງຕົນເອງສຳລັບການບໍຣິການເບິ່ງແຍງດູແລເພີ້ມເຕີມໃນຣະຫວ່າງເດືອນໃດເດືອນນຶ່ງຢູ່ໃນຣະຫວ່າງ *ຣະຍະເວລາຂອງການຟ້ອງຂື້ນສານເປັນກຸ່ມ.*

<u>*ການຟ້ອງຂື້ນສານເປັນກຸ່ມຂອງຜູ້ໃຫ້ການບໍຣິການຂອງການຕົກລົງກັນ*</u>

ບຸກຄົນທຸກໆຄົນຜູ້ທີ່, ໃນຣະຫວ່າງ *ຣະຍະເວລາຂອງການຟ້ອງຂື້ນສານເປັນກຸ່ມ:* (1) ໄດ້ຖືກອະນຸຍາດໃຫ້ໂດຍກົມ DSHS ທີ່ຈະເອົາການບໍຣິການເບິ່ງແຍງດູແລສ່ວນຕົວໃຫ້ແກ່ບຸກຄົນຜູ້ທີ່ມີຊົ່ວໂມງຂອງການບໍຣິການເບິ່ງແຍງດູແລຂອງເຂົາເຈົ້າຖືກພິຈາຣະນາຄິດໄລ່ໂດຍການວາງໃຊ້ກົດຫມາຍອັນກ່ອນ WAC 388-106-0213; (2) ໄດ້ອາສັຍຢູ່ນຳບຸກຄົນນັ້ນຢູ່ໃນຣະຫວ່າງເວລາເດືອນນັ້ນ; ແລະ (3) ໄດ້ໃຫ້ການບໍຣິການເບິ່ງແຍງດູແລສ່ວນຕົວທີ່ບໍ່ຖືກຈ່າຍເງິນໃຫ້ ຊຶ່ງກາຍເກີນຈຳນວນຂອງການບໍຣິການເບິ່ງແຍງດູແລສ່ວນຕົວທີ່ຖືກອະນຸຍາດໃຫ້ໂດຍກົມ DSHS ໃນຣະຫວ່າງເວລາເດືອນນັ້ນ.

*ຣະຍະເວລາຂອງການຟ້ອງຂື້ນສານເປັນກຸ່ມ* ທີ່ຖືກໃຊ້ຢູ່ໃນການຕີຄວາມຫມາຍອັນນີ້ຫມາຍເຖິງເດືອນຈຸນລາຍ 1, 2005 ໄປເຖິງເດືອນໂນເວັມເບີ 30, 2011.

## 2. ການຟ້ອງຂື້ນສານອັນນີ້ແມ່ນກ່ຽວກັບຫຍັງ?

ການຟ້ອງຂື້ນສານອັນນີ້ໄດ້ຖືກນຳຂື້ນມາໂດຍບຸກຄົນສອງຄົນຜູ້ທີ່ໄດ້ກ່າວຫາວ່າກົມ DSHS ໄດ້ວາງໃຊ້ກົດຫມາຍ WAC 388-106-0213, the Children's Assessment Rule (ກົດຣະບຽບຂອງການຕີຣາຄາປະເມີນຜົນສຳລັບເດັກນ້ອຍ) ຢ່າງບໍ່ຖືກຕ້ອງ. ເຂົາເຈົ້າໄດ້ກ່າວຫາວ່າການວາງໃຊ້ກົດຣະບຽບອັນນີ້ຢ່າງບໍ່ຖືກຕ້ອງໄດ້ກໍ່ໃຫ້ສະມາຊິກຂອງການຟ້ອງຂື້ນສານເປັນກຸ່ມຂອງຜູ້ຮັບການຕົກລົງກັນຕ້ອງໄດ້ຈ່າຍເງິນອອກຈາກຖົງຕົນເອງສຳລັບການບໍຣິການເບິ່ງແຍງດູແລສ່ວນຕົວທີ່ຈຳເປັນ. ເຂົາເຈົ້າຍັງໄດ້ກ່າວຫາອີກວ່າກົດຣະບຽບໄດ້ບີບຢ່າງບໍ່ຖືກຕ້ອງໃຫ້ສະມາຊິກຂອງການຟ້ອງຂື້ນສານເປັນກຸ່ມຂອງຜູ້ໃຫ້ການບໍຣິການຂອງການຕົກລົງກັນທີ່ຈະເຮັດວຽກໂດຍບໍ່ໄດ້ຖືກຈ່າຍເງິນໃຫ້ເພື່ອຈະຕອບສະນອງຄວາມຕ້ອງການຂອງການເບິ່ງແຍງດູແລສ່ວນຕົວຂອງຜູ້ຮັບການຊ່ວຍເຫລືອ Medicaid ສຳລັບເດັກນ້ອຍຜູ້ທີ່ເຂົາເຈົ້າຢູ່ນຳ. ໂດຍວິທີທາງແກ້ໄຂ, ເຂົາເຈົ້າໄດ້ກ່າວຫາວ່າໂດຍອີງຕາມກົດຫມາຍ RCW 74.04.080 ແລະ RCW 34.05.574, the Settlement Recipient Class (ການຟ້ອງຂື້ນສານຂອງຜູ້ຮັບການຕົກລົງກັນ) ມີສິດທີ່ຈະໄດ້ຮັບສະວັດດີການຍ້ອນກັບຄືນຫລັງໄປເຖິງວັນທີທີ່ກົດຣະບຽບຂອງການຕີຣາຄາປະເມີນຜົນສຳລັບເດັກນ້ອຍໄດ້ຖືກວາງໃຊ້ໃນເທື່ອທຳອິດ. ເຂົາເຈົ້າຍັງໄດ້ກ່າວຫາອີກວ່າກົມ DSHS ໄດ້ລ່ວງລະເມີດສັນຍາຂອງເຂົາເຈົ້ານຳການຟ້ອງຂື້ນສານຂອງຜູ້ຮັບການຕົກລົງກັນໂດຍການວາງໃຊ້ກົດຣະບຽບທີ່ບໍ່ມີຄຸນຄ່າໃຊ້ການໄດ້, ເຊັ່ນວ່າຜູ້ໃຫ້ການບໍຣິການຜູ້ທີ່ມີສິດຖືກຈ່າຍເງິນໃຫ້ສຳລັບວຽກງານທີ່ບໍ່ຖືກຈ່າຍເງິນໃຫ້ ຊຶ່ງໄດ້ຖືກເຮັດລົງໄປ ທີ່ຄວນຈະຕ້ອງຖືກຈ່າຍເງິນໃຫ້. ແຕ່ວ່າບໍ່ຍ້ອນການວາງໃຊ້ກົດຣະບຽບ. ກົມ DSHS ປະຕິເສດການທວງເງິນທຸກໆອັນ.

## 3. ການຟ້ອງຂື້ນສານເປັນກຸ່ມແມ່ນຫຍັງ, ແລະ ແມ່ນໃຜກ່ຽວພັນນຳແດ່?

ຢູ່ໃນການຟ້ອງຂື້ນສານເປັນກຸ່ມ, ຄົນນຶ່ງ ຫລື ຫລາຍໆຄົນ ("Class Representatives (ຜູ້ຕາງຫນ້າຂອງກຸ່ມຄົນ)") ຟ້ອງຂື້ນສານໃນນາມຂອງຄົນອື່ນຜູ້ທີ່ມີການທວງເງິນຄ້າຍຄືກັນ. ຄົນທັງຫມົດທຸກໆຄົນແມ່ນ "Class (ກຸ່ມຄົນ)" ຫລື "Class Members (ສະມາຊິກຂອງກຸ່ມຄົນ)." ສະມາຊິກຂອງກຸ່ມຄົນທັງຫມົດທຸກໆຄົນຖືກເອີ້ນວ່າໂຈດ. ສານຍ່ອນນຶ່ງແກ້ໄຂບັນຫາຂອງທຸກໆຄົນຢູ່ໃນກຸ່ມຄົນ, ຍົກເວັ້ນແຕ່ບຸກຄົນຜູ້ທີ່ເລືອກເອົາທີ່ຈະຍົກເວັ້ນເຂົາເຈົ້າເອງອອກຈາກກຸ່ມຄົນ. ຢູ່ໃນກໍຣະນີນີ້,M.T.E., ຜູ້ຮັບການຊ່ວຍເຫລືອ Medicaid ສຳລັບເດັກນ້ອຍ, ແລະ Sheryl Wagner, ຜູ້ໃຫ້ການບໍຣິການສ່ວນບຸກຄົນ, ແມ່ນຜູ້ຕາງຫນ້າຂອງການຟ້ອງຂື້ນສານເປັນກຸ່ມ. The Department of Social and Health Services (ກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ) ເປັນຈຳເລີຍ.

## 4. ສັນຍາການຕົກລົງກັນທີ່ຖືກວາງອອກມາເອົາຫຍັງໃຫ້ແດ່?

ຈຸດສຳຄັນຂອງສັນຍາການຕົກລົງກັນທີ່ຖືກວາງອອກມາໄດ້ຖືກບັນຣະຍາຍຢູ່ຂ້າງລຸ່ມນີ້. ທ່ານສາມາດກວດເບິ່ງສັນຍາທັງຫມົດຄືນ, ຊຶ່ງມີໄວ້ໃຫ້ຢູ່ທີ່ www.sylaw.com/MTEsettlement. ສັນຍາຈະກາຍເປັນມີຜົນບັງຄັບໃຊ້ໄດ້ເທົ່ານັ້ນຖ້າຫາກວ່າສານອະນຸມັດສັນຍາຫລັງຈາກການຟັງເຣື່ອງຂັ້ນສຸດທ້າຍ.

- **ເງິນທຶນການຕົກລົງກັນ $4,000,000**

  ສັນຍາເອົາເງິນທຶນການຕົກລົງກັນໃຫ້ເປັນຈຳນວນເງິນ $4,000,000 ເພື່ອຈະຈ່າຍການທວງເງິນທີ່ຖືກຍື່ນເຂົ້າມາໂດຍສະມາຊິກຂອງການຟ້ອງຂື້ນສານສຳລັບຜູ້ຮັບການຕົກລົງກັນ ແລະ ສະມາຊິກຂອງການຟ້ອງຂື້ນສານເປັນກຸ່ມສຳລັບຜູ້ໃຫ້ການບໍຣິການຕົກລົງກັນ, ຄ່າທຳນຽມຂອງທະນາຍຄວາມ, ຄ່າໃຊ້ຈ່າຍໃນການຟ້ອງຮ້ອງດຳເນີນຄະດີ, ການຈ່າຍເງິນສຳລັບການທວງເງິນທີ່ຄັດແຍ້ງກັນທີ່ອາດຈະເປັນໄປໄດ້ທຸກໆຢ່າງຊຶ່ງກ່ຽວພັນນຳສັນຍາການເຈຣະຈາຕົກລົງຮ່ວມກັນທີ່ມີຜົນບັງຄັບໃຊ້ໄດ້ໃນຣະຫວ່າງຣະຍະເວລາຂອງການຟ້ອງຂື້ນສານເປັນກຸ່ມ, ຄ່າໃຊ້ຈ່າຍການບໍຣິຫານໃບທວງເງິນ, ແລະ ເງິນຈ່າຍແບ່ງປັນກັນໃນທຸກໆຄະດີ.

- **ການດຳເນີນການທວງເງິນສຳລັບສະມາຊິກຂອງການຟ້ອງຂຶ້ນສານເປັນກຸ່ມຂອງ *ຜູ້ຮັບການຊ່ວຍເຫລືອ***

  ສະມາຊິກຂອງການຟ້ອງຂຶ້ນສານເປັນກຸ່ມຂອງຜູ້ຮັບການຊ່ວຍເຫລືອການຕົກລົງກັນ, ໃນນາມຂອງເຂົາເຈົ້າເອງ ຫລື ໂດຍຜ່ານພໍ່ແມ່ ແລະ/ຫລື ຜູ້ປົກຄອງຕາມກົດໝາຍຂອງເຂົາເຈົ້າ, ຈະມີເງື່ອນໄຂໄດ້ຮັບການຈ່າຍເງິນຈາກເງິນທຶນການຕົກລົງກັນໂດຍການສົ່ງຍື່ນໃບທວງເງິນເຂົ້າມາ (ລວມທັງ, ພ້ອມດ້ວຍຄຳແນະນຳ, ໃຫ້ເປັນພາກສ່ວນນຶ່ງຂອງໃບແຈ້ງການໃບນີ້) ຊຶ່ງຢືນຢັນພິສູດສິ່ງສີ່ຢ່າງຕໍ່ລົງໄປນີ້:

  1. ຜູ້ຮັບການຊ່ວຍເຫລືອໄດ້ຮັບການບໍຣິການເບິ່ງແຍງດູແລທີ່ຖືກອອກທຶນໃຫ້ໂດຍ Medicaid ແລະ ມີອາຍຸຕ່ຳກວ່າ 18 ປີເມື່ອເວລາການບໍຣິການໄດ້ຖືກເອົາໃຫ້;
  2. ຜູ້ຮັບການຊ່ວຍເຫລືອໄດ້ຮັບການບໍຣິການເບິ່ງແຍງດູແລສ່ວນຕົວກາຍເກີນຈຳນວນທີ່ກົມ DSHS ໄດ້ອະນຸຍາດໃຫ້ໃນຣະຫວ່າງຣະຍະເວລາຂອງການຟ້ອງຂຶ້ນສານເປັນກຸ່ມ (ຈຸນລາຍ 1, 2005 ໄປເຖິງໂນເວັມເບີ 30, 2011);
  3. ຊື່ຂອງຜູ້ໃຫ້ການບໍຣິການຂອງການບໍຣິການເບິ່ງແຍງດູແລສ່ວນຕົວ ແລະ ຈຳນວນ ແລະ ວັນທີຂອງການເບິ່ງແຍງດູແລສ່ວນຕົວ (ເດືອນ/ປີ) ; ແລະ
  4. ຄ່າຈັກອອກຈາກຖົງຕົນເອງທີ່ກ່ຽວພັນນຳການບໍຣິການເບິ່ງແຍງດູແລສ່ວນຕົວເຫລົ່ານີ້.

  ການທວງເງິນຍັງຈະຕ້ອງຖືກບັນທຶກອີກຄືກັນດ້ວຍຫລັກຖານຂອງການຈ່າຍເງິນ ຫລື ຄວາມຮັບຜິດຊອບບາງຢ່າງ, ເຊັ່ນວ່າ (ແຕ່ວ່າບໍ່ຈຳກັດໄປເຖິງ) ເຊັກທີ່ຖືກແຕກເອົາເງິນແລ້ວ, ໃບແຈ້ງການຂອງບັນຊີເຄຣດິດຄາດ, ໃບແຈ້ງການຂອງບັນຊີເຊັກກິງ, ບັນທຶກຣາຍໄດ້ຣາຍຈ່າຍຂອງຜູ້ໃຫ້ການບໍຣິການ ຫລື ໜັງສືເຊັນຊື່ໃສ່ຈາກຜູ້ໃຫ້ການບໍຣິການ ຫລື ນາຍຈ້າງຂອງຜູ້ໃຫ້ການບໍຣິການທີ່ບັນທຶກຈຳນວນເງິນທີ່ຖືກຈ່າຍໃຫ້ ຫລື ຕ້ອງໄດ້ຈ່າຍໃຫ້ (ຕາບໃດທີ່ໜັງສືໄດ້ຕິດແທດການຈ່າຍເງິນຢ່າງແຈ່ມແຈ້ງໃສ່ວັນທີຂອງການບໍຣິການເບິ່ງແຍງດູແລສ່ວນຕົວໂດຍຢ່າງໜ້ອຍເດືອນ/ວັນທີ) . ຜູ້ຮັບການຊ່ວຍເຫລືອຍັງຈະຕ້ອງໄດ້ອະນຸຍາດໃຫ້ຜູ້ບໍຣິການໃບທວງເງິນອີກຄືກັນທີ່ຈະເກັບກຳເອົາຣາຍຣະອຽດທີ່ຈຳເປັນທຸກໆຢ່າງຈາກກົມ DSHS ແລະ/ຫລື ຜູ້ໃຫ້ການບໍຣິການເບິ່ງແຍງດູແລສ່ວນບຸກຄົນຜູ້ທີ່ຖືກຊີ້ບອກເພື່ອຈະຢືນຢັນການທວງເອົາ ແລະ ການບັນທຶກຂອງຜູ້ຮັບການຊ່ວຍເຫລືອ. ໝາຍເຫດ: ການຈ່າຍເງິນແທນຄືນຈະມີໄວ້ໃຫ້ແນວດຽວເທົ່ານັ້ນສຳລັບການຈ່າຍເງິນທີ່ຖືກເຣັດເພື່ອຈະຄຸ້ມກວມເອົາຄວາມແຕກຕ່າງຣະຫວ່າງຊົ່ວໂມງທີ່ຖືກອະນຸຍາດໃຫ້ ແລະ ຊົ່ວໂມງພື້ນຖານຂອງຜູ້ທວງເອົາໃນເວລາຂອງການຈ່າຍເງິນ. ຈົ່ງເບິ່ງກົດໝາຍ WAC 388-106-0125 ເພື່ອການອະທິບາຍຊົ່ວໂມງພື້ນຖານ ແລະ ກຸ່ມຂອງຈຳພວກ.

- **ການດຳເນີນການທວງເງິນສຳລັບສະມາຊິກຂອງການຟ້ອງຂຶ້ນສານເປັນກຸ່ມຂອງ *ຜູ້ໃຫ້ການບໍຣິການ***

  ສະມາຊິກຂອງການຟ້ອງຂຶ້ນສານເປັນກຸ່ມຂອງຜູ້ໃຫ້ການບໍຣິການຂອງການຕົກລົງກັນຈະມີເງື່ອນໄຂໄດ້ຮັບການຈ່າຍເງິນຈາກເງິນທຶນການຕົກລົງກັນໂດຍການສົ່ງຍື່ນໃບທວງເງິນເຂົ້າມາ (ລວມທັງ, ພ້ອມດ້ວຍຄຳແນະນຳ, ໃຫ້ເປັນພາກສ່ວນນຶ່ງຂອງໃບແຈ້ງການໃບນີ້) ຊຶ່ງຢືນຢັນພິສູດສິ່ງສີ່ຢ່າງຕໍ່ລົງໄປນີ້:

  1. ຜູ້ໃຫ້ການບໍຣິການເປັນຜູ້ໃຫ້ການບໍຣິການສ່ວນບຸກຄົນທີ່ມີຄຸນນະວຸດທິຜູ້ທີ່ອາສັຍຢູ່ນຳ, ແລະ ໃຫ້ການບໍຣິການແກ່ຜູ້ຮັບການຊ່ວຍເຫລືອຂອງການບໍຣິການເບິ່ງແຍງດູແລສ່ວນບຸກຄົນທີ່ອອກທຶນໃຫ້ໂດຍ Medicaid ຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ ເມື່ອເວລາການບໍຣິການໄດ້ຖືກເອົາໃຫ້;
  2. ຜູ້ໃຫ້ການບໍຣິການໄດ້ໃຫ້ການບໍຣິການເບິ່ງແຍງດູແລສ່ວນຕົວກາຍເກີນຈຳນວນທີ່ກົມ DSHS ໄດ້ອະນຸຍາດໃຫ້ໃນຣະຫວ່າງຣະຍະເວລາຂອງການຟ້ອງຂຶ້ນສານເປັນກຸ່ມ (ຈຸນລາຍ 1, 2005 ໄປເຖິງໂນເວັມເບີ 30, 2011);
  3. ວັນທີ (ເດືອນ/ປີ) ທີ່ການບໍຣິການເບິ່ງແຍງດູແລສ່ວນຕົວໄດ້ກາຍເກີນຈຳນວນທີ່ຖືກອະນຸຍາດໃຫ້; ແລະ
  4. ຜູ້ໃຫ້ການບໍຣິການບໍ່ໄດ້ຖືກຈ່າຍເງິນໃຫ້ສຳລັບການບໍຣິການເຫລົ່ານັ້ນ.

  ຜູ້ໃຫ້ການບໍຣິການຍັງຈະຕ້ອງໄດ້ອະນຸຍາດໃຫ້ຜູ້ບໍຣິຫານການທວງເງິນອີກຄືກັນທີ່ຈະເກັບກຳເອົາຣາຍຣະອຽດຈຳເປັນທຸກໆຢ່າງຈາກກົມ DSHS ແລະ/ຫລື ຜູ້ຮັບເອົາການເບິ່ງແຍງດູແລສ່ວນຕົວທີ່ຖືກອອກທຶນໃຫ້ໂດຍ Medicaid ທີ່ກ່ຽວຂ້ອງເພື່ອຈະຢືນຢັນການກ່າວຢືນຢັນຂອງຜູ້ໃຫ້ການບໍຣິການ. ການທວງເງິນຂອງຜູ້ໃຫ້ການບໍຣິການທີ່ຖືກຕ້ອງສົມບູນທຸກໆອັນຈະຖືກຈ່າຍເງິນທົດແທນໃຫ້ເປັນ "proxy (ຈຳນວນຕັ້ງໄວ້)" ຕໍ່ເດືອນເປັນຈຳນວນເງິນ $450 ຕໍ່ເດືອນ, ນອກຈາກວ່າມັນບໍ່ມີເງິນທຶນພຽງພໍທີ່ຈະຈ່າຍໃບທວງເງິນທຸກໆໃບໄດ້ 100%.

  ຜູ້ບໍຣິຫານການທວງເງິນຈະກວດເບິ່ງໃບທວງເງິນຄືນເພື່ອຈະຢືນຢັນວ່າສິ່ງສີ່ຢ່າງທີ່ຈະຕ້ອງມີປາກົດວ່າມີຢູ່ໃນໃບຟອມທວງເງິນທີ່ກ່ຽວຂ້ອງ ແລະ ວ່າເອກສານບັນທຶກທີ່ຖືກຍື່ນສົ່ງເຂົ້າມານັ້ນອູ້ມຊູຈຳນວນເງິນທີ່ຖືກທວງເອົາ. ຜູ້ບໍຣິຫານການທວງເງິນຍັງຈະຢືນຢັນວ່າຜູ້ໃຫ້ການບໍຣິການແມ່ນມີຊື່ຢູ່ໃນລາຍຊື່ທີ່ຖືກເອົາໃຫ້ໂດຍກົມ DSHS ສຳລັບສະມາຊິກຂອງການຟ້ອງຂຶ້ນສານເປັນກຸ່ມການຕົກລົງກັນທີ່ອາດຈະເປັນໄປໄດ້ໃນຣະຫວ່າງເວລາຂອງການທວງເງິນ, ແລະ ວ່າຈຳນວນເງິນທວງເອົາບໍ່ຊັບຊ້ອນກັນ.

  ຜູ້ບໍຣິຫານການທວງເງິນຕ້ອງໄດ້ເອົາໃຫ້ຜູ້ທວງເງິນໃບຟອມທວງເງິນທີ່ຂາດເຂີນບໍ່ພຽງພໍເພື່ອຈະມີໂອກາດທີ່ຈະດັດແປງບັນຫາຕ່າງໆ. ທະນາຍຄວາມຂອງການຟ້ອງຂຶ້ນສານເປັນກຸ່ມສາມາດຊ່ວຍເຫລືອຜູ້ທວງເງິນນຳການດັດແປງບັນຫາຕ່າງໆນຳໃບທວງເງິນຂອງເຂົາເຈົ້າ.

- **ຈຳນວນເງິນການຕົກລົງກັນຂອງສັນຍາເຈຣະຈາໄກ່ເກັ່ຽຮ່ວມກັນ**

  ສັນຍາການຕົກລົງກັນທີ່ຖືກວາງອອກມາລວມເອົາ *Appendix A*, ຊຶ່ງບັນຈຸສັນຍາຕ່າງຫາກຣະຫວ່າງຈຳເລີຍ, Service Employees International Union ("SEIU") 775, SEIU Healthcare NW Health Benefits Trust ("HBT") ແລະ SEIU Healthcare NW Training Partnership ("TP"), ອີງໃສ່ວ່າແມ່ນ "CBA Settlement (ການຕົກລົງກັນຂອງ CBA)." ພາຍໃຕ້ CBA Settlement, SEIU 775 ຈະຕ້ອງໄດ້ຮັບເງິນ $115,000, HBT ຈະຕ້ອງໄດ້ຮັບເງິນ $30,000, ແລະ TP ຈະຕ້ອງໄດ້ຮັບເງິນ $5,000 ຈາກເງິນທຶນການຕົກລົງກັນ, ເປັນການແລກປ່ຽນສຳລັບການປົດປ່ອຍການທວງເງິນທີ່ອາດຈະເປັນໄປໄດ້ໃສ່ຈຳເລີຍ.

- **ຄ່າທຳນຽມຂອງທະນາຍຄວາມ, ຄ່າໃຊ້ຈ່າຍໃນການຟ້ອງຮ້ອງດຳເນີນຄະດີ, ແລະ ຄ່າໃຊ້ຈ່າຍໃນການບໍລິຫານການທວງເງິນ**

  ພາຍໃຕ້ສັນຍາການຕົກລົງກັນທີ່ຖືກວາງອອກມາ, ທະນາຍຄວາມຂອງການຟ້ອງຂື້ນສານເປັນກຸ່ມຈະຈ່າຍຄ່າທຳນຽມຂອງທະນາຍຄວາມຂອງເຂົາເຈົ້າຈາກເງິນທຶນການຕົກລົງກັນ, ອີງຕາມອັດຕຣາຊົ່ວໂມງຕາມປົກກະຕິຂອງເຂົາເຈົ້າ ແລະ ຈຳນວນຊົ່ວໂມງທີ່ຖືກໃຊ້ໃນການຟ້ອງຮ້ອງດຳເນີນຄະດີ. ນອກຈາກນັ້ນອີກ, ຄ່າໃຊ້ຈ່າຍຂອງການຟ້ອງຮ້ອງດຳເນີນຄະດີ (ເງິນທີ່ທະນາຍຄວາມໄດ້ຈ່າຍອອກໄປຈາກຖົງຂອງເຂົາເຈົ້າເອງໃນນາມຂອງກຸ່ມຄົນ) ແລະ ຄ່າໃຊ້ຈ່າຍສຳລັບການບໍລິຫານການທວງເງິນຈະຖືກຮ້ອງຂໍເອົາໃຫ້ຖືກຈ່າຍໃຫ້ຈາກເງິນທຶນການຕົກລົງກັນ. ຄ່າທຳນຽມຂອງທະນາຍຄວາມຂອງການຟ້ອງຂື້ນສານເປັນກຸ່ມ, ຄ່າໃຊ້ຈ່າຍຂອງການຟ້ອງຮ້ອງດຳເນີນຄະດີ, ແລະ ຄ່າໃຊ້ຈ່າຍສຳລັບການບໍລິຫານການທວງເງິນຈະຕ້ອງຖືກກວດເບິ່ງຄືນ ແລະ ຕ້ອງຖືກອະນຸມັດໃຫ້ໂດຍສານ.

- **ເງິນຈ່າຍແບ່ງປັນກັນໃນຄະດີ**

  ເງິນຈ່າຍແບ່ງປັນກັນໃນຄະດີສູງເຖິງ $25,000 ສຳລັບຜູ້ຕາງໜ້າຂອງແຕ່ລະຈຳພວກຄົນ (M.T.E. and Sheryl Wagner Houlihan) ເປັນຈຳນວນບໍ່ຫລາຍເກີນກວ່າ $50,000 ຈະຖືກຮ້ອງຂໍເອົາຈາກເງິນທຶນການຕົກລົງກັນ. ສານຕ້ອງໄດ້ອະນຸມັດເງິນຈ່າຍແບ່ງປັນກັນໃນຄະດີ.

- **ເງິນທຶນບໍ່ພຽງພໍ ຫລື ເງິນທຶນກາຍເກີນ**

  ຖ້າຫາກວ່າ, ຫລັງຈາກການຈ່າຍເງິນຈຳນວນເງິນການຕົກລົງກັນຂອງສັນຍາເຈຣະຈາໄກ່ເກັ່ຽຮ່ວມກັນ, ຄ່າທຳນຽມຂອງທະນາຍຄວາມ, ຄ່າໃຊ້ຈ່າຍຂອງການຟ້ອງຮ້ອງດຳເນີນຄະດີ, ເງິນຈ່າຍແບ່ງປັນກັນໃນຄະດີ, ຄ່າໃຊ້ຈ່າຍສຳລັບການບໍລິຫານການທວງເງິນ, ມັນມີເງິນທຶນບໍ່ພຽງພໍທີ່ຈະຈ່າຍ 100% ຂອງການທວງເງິນທີ່ຖືກຕ້ອງສົມບູນທຸກໆອັນ, ແລ້ວການທວງເງິນທີ່ຖືກຕ້ອງສົມບູນທຸກໆອັນ, ລວມທັງການທວງເງິນຂອງຜູ້ຮັບການຊ່ວຍເຫລືອ ແລະ ຜູ້ໃຫ້ການບໍລິການທັງສອງຄົນ, ຈະຖືກຈ່າຍເງິນໃຫ້ໃນແບບການແຈກຢາຍ *pro rata* (ເປີເຊັນ) ຂອງຈຳນວນເງິນທວງເອົາທີ່ຖືກອະນຸມັດໃຫ້ຂອງເຂົາເຈົ້າ.

  ຫລັງຈາກການຈ່າຍເງິນຈຳນວນເງິນການຕົກລົງກັນຂອງສັນຍາເຈຣະຈາໄກ່ເກັ່ຽຮ່ວມກັນ, ຄ່າທຳນຽມຂອງທະນາຍຄວາມ, ຄ່າໃຊ້ຈ່າຍຂອງການຟ້ອງຮ້ອງດຳເນີນຄະດີ, ເງິນຈ່າຍແບ່ງປັນກັນໃນຄະດີ, ຄ່າໃຊ້ຈ່າຍສຳລັບການບໍລິຫານການທວງເງິນ, ແລະ ການທວງເງິນທີ່ຖືກຕ້ອງສົມບູນທຸກໆອັນ 100% ແລ້ວ, ຖ້າຫາກວ່າຍັງມັນມີເງິນກາຍເກີນໃນເງິນທຶນການຕົກລົງກັນ, ແລ້ວເງິນທຶນທີ່ກາຍເກີນອັນນັ້ນຈະຕ້ອງຖືກສົ່ງກັບຄືນໄປຫາຣັດວໍຊິງຕັນ.

## 5. ເມື່ອໃດເງິນທຶນການຕົກລົງກັນຈະມີໄວ້ໃຫ້?

ສານຕ້ອງໄດ້ອະນຸມັດຂັ້ນສຸດທ້າຍໃນເງິນຕົກລົງກັນທີ່ຖືກວາງອອກມາ, ແລະ ຖ້າຫາກວ່າສະມາຊິກຂອງການຟ້ອງຂື້ນສານເປັນກຸ່ມຄົນໃດຄົນນຶ່ງຂໍອຸທອນ, ການດຳເນີນການທາງສານຂັ້ນສຸດທ້າຍຂອງການອຸທອນຕ່າງໆຕ້ອງໄດ້ຖືກເຮັດກ່ອນທີ່ເງິນທຶນຈະມີໄວ້ໃຫ້.

## 6. ຂ້ອຍຈະຕອບຕໍ່ສັນຍາການຕົກລົງກັນທີ່ຖືກວາງອອກມາໄດ້ແນວໃດ?

- **ທ່ານຈະຍື່ນໃບທວງເງິນໄດ້**

  ຕາມທີ່ຖືກບັນຣະຍາຍຢູ່ຂ້າງເທິງນີ້, ທ່ານຈະຍື່ນໃບທວງເງິນໄດ້ຖ້າຫາກວ່າທ່ານເປັນສະມາຊິກຂອງ ບໍ່ວ່າຈະແມ່ນ ກຸ່ມຟ້ອງຂື້ນສານສຳລັບຜູ້ຮັບເອົາການຕົກລົງກັນ ຫລື ກຸ່ມຟ້ອງຂື້ນສານສຳລັບຜູ້ໃຫ້ການບໍລິການສຳລັບການຕົກລົງກັນ. ການທວງເງິນຕ້ອງຖືກຮັບເອົາໂດຍຜູ້ບໍລິຫານການທວງເງິນກ່ອນ 04/20/2016. ກະຣຸນາປະຕິບັດຕາມຄຳແນະນຳທີ່ມານຳໃບທວງເງິນທີ່ຖືກລັດມານຳເພື່ອຈະຍື່ນການທວງເງິນຂອງທ່ານ. ໃບຟອມການທວງເງິນເພີ້ມເຕີມສາມາດຖືກດາວໂຫລດໄດ້ຈາກ [www.symslaw.com/MTEsettlement](www.symslaw.com/MTEsettlement).

- **ທ່ານຈະຍົກເວັ້ນຕົວທ່ານເອງ ຫລື ຜູ້ຫວັງເພິ່ງຂອງທ່ານໄດ້ (ເລືອກບໍ່ເຂົ້າຮ່ວມ)**

  ຖ້າຫາກວ່າທ່ານປະສົງທີ່ຈະຍົກເວັ້ນຕົວທ່ານເອງ ຫລື ຜູ້ຫວັງເພິ່ງຂອງທ່ານອອກຈາກການຟ້ອງຂື້ນສານເປັນກຸ່ມ, ທ່ານຕ້ອງໄດ້ຂຽນໜັງສືກ່າວວ່າທ່ານປະສົງທີ່ຈະຖືກຍົກເວັ້ນ ຫລື ສົ່ງໃບຟອມຍົກເວັ້ນ ຫລື "Opt-Out" ທີ່ຖືກລັດມານຳເຂົ້າມາ. ໜັງສື ຫລື ໃບຟອມຂອງທ່ານຕ້ອງຖືກຕີກາໄປສະນີກ່ອນ

  04/20/2016 ແລະ ຖືກສົ່ງໄປທີ່:

  M.T.E. v. Washington DSHS Settlement Administrator
  P.O. Box 3266
  Portland, OR  97208 - 3266

  ຖ້າຫາກວ່າທ່ານເລືອກທີ່ຈະອອກຈາກກຸ່ມຄົນກຸ່ມນຶ່ງ, ທ່ານບໍ່ມີເງື່ອນໄຂທີ່ຈະເຮັດການທວງເງິນ ຫລື ໄດ້ຮັບການຈ່າຍເງິນ ຖ້າຫາກວ່າສັນຍາການຕົກລົງກັນທີ່ຖືກວາງອອກມາໄດ້ຖືກອະນຸມັດ. ທ່ານຈະ, ເຖິງຢ່າງໃດກໍຕາມ, ຮັກສາສິດທິຕ່າງໆທີ່ທ່ານມີຢູ່ໄວ້ເພື່ອຈະຕິດຕາມການທວງເງິນສ່ວນບຸກຄົນສຳລັບສະວັດດີການຍ້ອນຄືນຫລັງ ຫລື ລ່ວງລະເມີດຄວາມເສັ່ຽຫາຍຂອງສັນຍາໃສ່ກົມ DSHS ກ່ຽວກັບການວາງໃຊ້ຂອງເຂົາເຈົ້າໃນກົດໝາຍ WAC 388-106-0213, the Children's Assessment Rule (ກົດຣະບຽບການຕີຣາຄາປະເມີນຜົນຂອງເດັກນ້ອຍ). ຖ້າຫາກວ່າທ່ານເຊື່ອວ່າທ່ານມີການທວງເງິນເຫລົ່ານີ້, ທ່ານຄວນຈະປາກປຶກສານຳທະນາຍຄວາມ. ທ່ານຄວນຈະເວົ້າລົມນຳທະນາຍຄວາມກ່ຽວກັບກົດໝາຍຂອງຂອບເຂດເວລາທີ່ກ່ຽວຂ້ອງນຳ.

- **ທ່ານຈະອອກຄວາມເຫັນໃສ່, ຄັດຄ້ານໃສ່, ຫລື ສະນັບສະນູນສັນຍາການຕົກລົງກັນທີ່ຖືກວາງອອກມາ**

  ສານຈະຈັດການຟັງເຣື່ອງຂັ້ນສຸດທ້າຍຂື້ນກ່ຽວກັບສັນຍາການຕົກລົງກັນທີ່ຖືກວາງອອກມາໃນວັນທີ 05/20/2016 ໃນເວລາ 9:00 am, Thurston County Courthouse, 2000 Lakeridge Drive SW, Room 204, Olympia, WA  98502.

ທ່ານບໍ່ໄດ້ຖືກບັງໃຫ້ເຂົ້າຮ່ວມໃນການຟັງເຣື່ອງ, ແລະ ທ່ານບໍ່ໄດ້ຖືກບັງໃຫ້ສົ່ງຄວາມເຫັນເຂົ້າມາສຳລັບການພິຈາຣະນາ. ຄວາມເຫັນທຸກໆຢ່າງກ່ຽວກັບສັນຍາການຕົກລົງກັນທີ່ຖືກວາງອອກມາ, ເຖິງຢ່າງໃດກໍຕາມ, ຕ້ອງຖືກສົ່ງເຂົ້າມາລ່ວງໜ້າ ແລະ ໂດຍທາງໜັງສືໄປຫາສານ.

ທ່ານຈະເຂົ້າມາຮ່ວມນຳການຟັງເຣື່ອງກໍໄດ້, ແລະ ທ່ານຈະພາຜູ້ຕາງໜ້າຕາມກົດໝາຍມານຳຖ້າຫາກວ່າທ່ານປະສົງດ້ວຍຣາຍຈ່າຍຂອງທ່ານເອງ. ທ່ານຕ້ອງໄດ້ບອກສານໂດຍລ່ວງໜ້າ ແລະ ເປັນລາຍລັກອັກສອນວ່າທ່ານມີແຜນການທີ່ຈະເຂົ້າມາຮ່ວມນຳການຟັງເຣື່ອງເພື່ອຈະຄັດຄ້ານໃສ່, ອອກຄວາມເຫັນໃສ່, ຫລື ສະນັບສະນູນຢ່າງເປັນທາງການໃນສັນຍາການຕົກລົງກັນທີ່ຖືກວາງອອກມາ ຫລື ຄຳຮ້ອງຂໍເອົາການຈ່າຍເງິນສຳລັບຄ່າທຳນຽມຂອງທະນາຍຄວາມຂອງຜູ້ຕາງໜ້າຂອງກຸ່ມຄົນຟ້ອງຂຶ້ນສານ, ຄ່າໃຊ້ຈ່າຍສຳລັບການດຳເນີນການຟ້ອງຂຶ້ນສານ, ຄ່າໃຊ້ຈ່າຍສຳລັບການບໍຣິຫານການທວງເງິນ, ຫລື ການຈ່າຍເງິນແບ່ງປັນກັນໃນຄະດີ.

ຖ້າຫາກວ່າທ່ານເລືອກທີ່ຈະສົ່ງໜັງສືຄວາມເຫັນເຂົ້າມາ ຫລື ມາປາກົດຕົວໃນເວລາການຟັງເຣື່ອງຂອງສານ, ໜັງສືຂອງທ່ານ <u>ຕ້ອງ</u> ຖືກຮັບເອົາໂດຍບໍ່ກາຍເກີນວັນທີ 04/20/2016 ແລະ ຕ້ອງຖືກສົ່ງໄປທີ່:

Richard E. Spoonemore and Eleanor Hamburger,
Class Counsel
SIRIANNI YOUTZ SPOONEMORE HAMBURGER
999 Third Avenue, Suite 3650
Seattle, WA 98104

John K. McIlhenny, Jr., William McGinty and
Martin Wyckoff
OFFICE OF THE ATTORNEY GENERAL
P.O. Box 40124
Olympia, WA 98504-0124

## 7. ຂ້ອຍຈະໄດ້ຣາຍຣະອຽດເພີ້ມເຕີມຢູ່ໃສ?

ເພື່ອຣາຍຣະອຽດ, ທ່ານຈະແວ່ເຂົ້າເບິ່ງແວບໄຊທ໌ສຳລັບທະນາຍຄວາມຂອງການຟ້ອງຂຶ້ນສານເປັນກຸ່ມໄດ້ທີ່: www.symslaw.com/MTEsettlement. ທ່ານສາມາດຕິດຕໍ່ຫາກົມ DSHS ໄດ້ທີ່ເລກ (360) 725-3449. ຖ້າຫາກວ່າທ່ານເປັນຜູ້ໃຫ້ການບໍຣິການສ່ວນບຸກຄົນ, ທ່ານຍັງສາມາດໂທຫາ SEIU 775 Member Resource Center ໄດ້ທີ່ເລກ 1 (866) 371-3200. ທ່ານຍັງສາມາດໂທຫາ ຫລື ຂຽນຫາທະນາຍຄວາມຂອງການຟ້ອງຂຶ້ນສານເປັນກຸ່ມເພື່ອຈະຂໍເອົາໂກປີ້ຂອງເອກສານກ່ຽວກັບເຣື່ອງນີ້ແນວໃດແນວນຶ່ງໄດ້:

Richard E. Spoonemore and Eleanor Hamburger, Class Counsel
SIRIANNI YOUTZ SPOONEMORE HAMBURGER
999 Third Avenue, Suite 3650 Seattle, WA 98104
ໂທຣະສັບ: (206) 838-3210
ອີແມລ໌: ehamburger@sylaw.com or rspoonemore@sylaw.com

Если Вы желаете прочитать это извещение на русском языке, пожалуйста, посетите [WEBSITE].
如果您想閱讀中文的本通知書, 請前往網站 [WEBSITE].
Nếu quý vị muốn đọc thông báo này bằng tiếng Việt Nam, xin đến [WEBSITE].
이 통지서를 한국어로 읽으시기 원할 경우는 [WEBSITE]을 방문하십시오.
Haddii aad jeclaan lahayd inaad akhrido ogeysiiskan oo Somali ah, fadlan tag [WEBSITE].
ប្រសិនបើអ្នកចង់អានសេចក្ដីជូនដំណឹងនេះជាភាសាខ្មែរ សូមទៅកាន់ [WEBSITE]។
Si desea leer esta notificación en español, por favor diríjase a [WEBSITE].
Nếu quý vị muốn đọc thông báo này bằng tiếng Việt Nam, xin đến [WEBSITE].
**ຖ້າຫາກວ່າທ່ານຢາກຈະອ່ານໃບແຈ້ງການໃບນີ້ເປັນພາສາລາວ, ກະຣຸນາໄປທີ່** [WEBSITE]

# ໃບຟອມການຍົກເວັ້ນ ຫລື **"OPT-OUT"**

**ໃບຟອມໃບນີ້ຕ້ອງຖືກຂຽນປະກອບໂດຍສະເພາະເທົ່ານັ້ນ ໂດຍບຸກຄົນຜູ້ທີ່ເປັນສະມາຊິກຂອງກຸ່ມຟ້ອງຂື້ນສານ ຜູ້ທີ່ ປໍ່ ປະສົງທີ່ຈະເປັນສະມາຊິກຂອງກຸ່ມຟ້ອງຂື້ນສານຕໍ່ໄປ ແລະ ຜູ້ທີ່ ປໍ່ ຕ້ອງການ ການອະນຸມັດເງິນແນວໃດຊຶ່ງອາດຈະເປັນຜົນອອກມາຈາກການດຳເນີນການຟ້ອງຂື້ນສານອັນນີ້.**

ຊື່: ______________________________________________
ຊື່ ຊື່ກາງ ນາມສະກຸນ

ທີ່ຢູ່: ______________________________________________
ເລກ ແລະ ຖນົນ

______________________________________________
ເມືອງ ຣັດ ຊິບໂຄດ

ວັນເກີດ: ______________________ ໂທຣະສັບ: ______________________

ໂດຍການເຊັນຊື່ໃສ່ຟອມໃບນີ້, ຂ້າພະເຈົ້າຢັ້ງຢືນວ່າຂ້າພະເຈົ້າໄດ້ອ່ານໃບແຈ້ງການເຖິງສະມາຊິກຂອງການຟ້ອງຂື້ນສານເປັນກຸ່ມ ແລະ ຂ້າພະເຈົ້າເຂົ້າໃຈວ່າ:

1. ຂ້າພະເຈົ້າກຳລັງຈະຖອນຕົວຂ້າພະເຈົ້າອອກຈາກການເປັນສະມາຊິກຂອງກຸ່ມຄົນຟ້ອງຂື້ນສານ;
2. ຂ້າພະເຈົ້າຈະບໍ່ໄດ້ຮັບສະວັດດີການດ້ານການເງິນແນວໃດຈາກການຟ້ອງຂື້ນສານອັນນີ້;
3. ຂ້າພະເຈົ້າມີສິດທີ່ຈະຕິດຕາມຕໍ່ໄປໂດຍຕົນເອງ, ໂດຍມີ ຫລື ບໍ່ມີທະນາຍຄວາມຂອງຂ້າພະເຈົ້າເອງ; ແລະ
4. ຂ້າພະເຈົ້າເຂົ້າໃຈວ່າການທວງເງິນຂອງຂ້າພະເຈົ້າອາດຈະຖືກສະທ້ອນເຖິງໂດຍກົດຫມາຍຂອງຂອບເຂດເວລາທີ່ກ່ຽວຂ້ອງນຳ ແລະ ວ່າຂ້າພະເຈົ້າຄວນຈະເວົ້າລົມເຣື່ອງກົດຫມາຍຂອງຂອບເຂດເວລານຳທະນາຍຄວາມຄົນໃດຄົນນຶ່ງຜູ້ທີ່ຂ້າພະເຈົ້າຢາກຈະປຶກສານຳ.

ລາຍເຊັນ: ______________________ ວັນທີ: ______________________

ເມືອງ ແລະ ຣັດບ່ອນທີ່ຖືກເຊັນຊື່ໃສ່: ______________________________

**ກະຣຸນາສົ່ງໃບຟອມທີ່ຖືກຂຽນປະກອນແລ້ວ ຖືກຕິກາໄປສະນີກ່ອນວັນທີ _04/20/2016 ປທີ່: ___**

M.T.E. v. Washington DSHS Settlement Administrator
P.O. Box 3266
Portland, OR 97208 - 3266